# <u>ເອກະສານແນວຄວາມຄິດກ່ຽວກັບເວທີສົນທະນາໃນກອງປະຊຸມໂຕະມົນ</u>

**ກອງປພຊຸມໂຕະມົນ ປີ 2024**

**ການສົນທະນາໃນຄະນະທີ 2: ຂໍ້ສະເໜີແນະ/ວິທີແກ້ໄຂໄລຍະສັ້ນ ແລະ ໄລຍະຍາວ ເພື່ອສະໜັບສະໜູນການພັດທະນາຊັບສິນດ້ານມະນຸດຂອງ ສປປ ລາວ ແລະ ຮັບຮູ້ເຖິງທ່າແຮງອັນເຕັມສ່ວນຂອງປະຊາກອນໄວໜຸ່ມ ໃນການຂັບເຄື່ອນການພັດທະນາປະເທດຊາດແບບຍືນຍົງ.**

**ພາກສະເໜີ**

ກອງປະຊຸມໂຕະມົນ ປີ 2024 ທີ່ຈະມາເຖິງແມ່ນກຳນົດສຳລັບວັນທີ 14 ພະຈິກ 2024 ທີ່ສູນປະຊຸມແຫ່ງຊາດ.

ປີນີ້ ຖືເປັນຂີດໝາຍອັນສຳຄັນຂອງ ສປປ ລາວ ຍ້ອນວ່າ ໃນກອງປະຊຸມດັ່ງກ່າວ ຈະມີການລາຍງານ ແລະ ປະເມີນຄວາມຄືບໜ້າໃນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖກິດ-ສັງຄົມ ຄັ້ງທີ 9 ແລະ ຈະໄດ້ສຸມໃສ່ການກຳນົດບຸລິມະສິດຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີຂ້າງໜ້າ, ແຜນຄັ້ງທີ 10 (2026-2030).

ວາລະສຳລັບກອງປະຊຸມໂຕະມົນ ປີ 2024 ຈະປະກອບມີ 2 ກອງປະຊຸມປຶກສາຫາລືຄູ່ຂະໜານ ເພື່ອແນໃສ່ສ້າງເວທີສຳລັບການແລກປ່ຽນຢ່າງກວ້າງຂວາງ ລະຫວ່າງພາກສ່ວນຕ່າງໆ ກ່ຽວຂ້ອງກ່ຽວກັບບັນຫາການພັດທະນາທີ່ເປັນບູລິມະສິດສູງສຸດ ຂອງ ສປປ ລາວ ເຊັ່ນ:

1. ສະພາບເສດຖະກິດ ແລະ ການເງິນ ແລະ ທິດທາງໃນຕໍ່ໜ້າເພື່ອຄວາມຍືນຍົງດ້ານສິ່ງແວດລ້ອມ ແລະ ເສດຖະກິດທີ່ຢືດຢຸ່ນ;
2. ຄຳແນະນຳໄລຍະສັ້ນ ແລະ ໄລຍະຍາວ ເພື່ອສະໜັບສະໜູນການພັດທະນາທຶນມະນຸດຂອງ ສປປ ລາວ ແລະ ວິທີການເພື່ອຮັບຮູ້ທ່າແຮງອັນເຕັມທີ່ຂອງປະຊາກອນໄວໜຸ່ມຂອງລາວ ໃນການຂັບເຄື່ອນການພັດທະນາປະເທດຊາດແບບຍືນຍົງ ແລະ ຮອບດ້ານ.

ໝາກຜົນຂອງການສົນທະນາຄັ້ງນີ້ຈະນຳໄປສູ່ການສົນທະນາຄົບຄະນະຄັ້ງຕໍ່ໄປ. ການປຶກສາຫາລືຄັ້ງນີ້ຈະໄດ້ໄປສັງລວມເອົາໃນຄຳແນະນຳໃນການຜັນຂະຫຍາຍຜົນກອງປະຊຸມໂຕະມົນ ທີ່ທ່ານນາຍົກລັດຖະມົນຕີຈະໄດ້ເຊັນອອກພາຍຫຼັງກອງປະຊຸມຂັ້ນສູງຄັ້ງນີ້.

**ຈຸດປະສົງ**

ເພື່ອລາຍງານເຖິງຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 9, ພ້ອມກັບການກຳນົດບູລິມະສິດໃນອະນາຄົດ ເພື່ອເປັນບ່ອນອີງທີ່ສຳຄັນຕໍ່ການສ້າງແຜນ ພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 10 ໄລຍະ 2026-2030.

ເວທີການປຶກສາຫາລືຈະສຸມໃສ່ຄົ້ນຄວ້າກ່ຽວກັບບັນດາຂໍ້ສະເໜີແນະນຳຕ່າງໆ ວ່າຈະນຳໄປຜັນຂະຫຍາຍແນວໃດໃນຕໍ່ໜ້າ, ໂດຍອີງໃສ່ຂອບນະໂຍບາຍແຫ່ງຊາດທີ່ມີຢູ່ ແລະ ຄວາມຄືບໜ້າໃນການຈັດຕັ້ງແຜນ ມາຮອດປະຈຸບັນ.

ເວທີສົນທະນາດັ່ງກ່າວນີ້ ຈະເສີມສ້າງການສົນທະນາທີ່ເກີດຂຶ້ນພາຍໃນໜ່ວຍງານວິຊາການ ຂອງແຕ່ລະຂະແໜງການ ໂດຍໃຫ້ມີເວທີສຳລັບການສົນທະນາກ່ຽວກັບບັນຫາທີ່ສຳຄັນທີ່ກ່ຽວຂ້ອງກັບຫຼາຍຂະແໜງການ ແລະ ສະຫນອງຊ່ອງທາງໂດຍກົງ ເພື່ອໃຫ້ຜູ້ທີ່ມີອຳນາດໃນການຕັດສິນໃຈໃນລະດັບສູງ ໄດ້ຮັບຮູ້ເຖິງຂໍ້ແນະນຳຕ່າງໆທີ່ສຳຄັນເຫຼົ່ານີ້.

ເວທີການສົນທະນາ ມີຈຸດປະສົງເພື່ອສ້າງຄໍາແນະນໍາສະເພາະທີ່ສາມາດລວມເຂົ້າໃນແຜນການເຮັດວຽກ ສໍາລັບກອງເລຂາຂະບວນການໂຕະມົນ, ໜ່ວຍງານວິຊາການຂອງຂະແໜງການຕ່າງໆ ແລະ ບັນຈຸເຂົ້າໃນຮ່າງແຜນ ພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 10.

*ໂຄງຮ່າງຂອງວາລະການສົນທະນາ*

ເວທີການປຶກສາຫາລືທັງສອງຫົວຂໍ້ ຈະດໍາເນີນໄປພ້ອມໆກັນຢູ່ຄົນລະຫ້ອງ ຂອງຫໍປະຊຸມແຫ່ງຊາດ. ຜູ້ເຂົ້າຮ່ວມກອງປະຊຸມໂຕະມົນທຸກຄົນ ສາມາດເຂົ້າຮ່ວມຮັບຟັງ ແລະ ຕິດຕາມ ເວທີການສົນທະນາໄດ້.

ພາກສ່ວນໃດທີ່ມີຜູ້ແທນສອງຄົນ ຫຼື ຫຼາຍກວ່ານັ້ນເຂົ້າຮ່ວມກອງປະຊຸມໂຕະມົນ ປີ 2024 ແມ່ນສະເໜີໃຫ້ແບ່ງກັນເຂົາຮ່ວມໃນສອງກຸ່ມສົຍທະນາດັ່ງກ່າວ.

ການສົນທະນາຂອງແຕ່ລະຄະນະ ຈະເລີ່ມດ້ວຍການກ່າວຕ້ອນຮັບສັ້ນໆໂດຍຜູ້ນໍາພາການສົນທະນາ (ສູງສຸດ 3 ນາທີ), ຕິດຕາມດ້ວຍຄໍາຖາມຕ່າງໆຕໍ່ນັກສົນທະນາແຕ່ລະຄົນ. ຜູ້ສົນທະນາຕ້ອງຕອບໃຫ້ຊັດເຈນ ແລະ ກະທັດຮັດ (3 ນາທີສໍາລັບຮອບທໍາອິດ ແລະ ບໍ່ເກີນຫນຶ່ງນາທີຫຼືສອງນາທີສໍາລັບຄໍາຖາມຕໍ່ໄປ). ຈະບໍ່ມີບົດນໍາສະເໜີເພື່ອສາຍໃສ່ຈໍ ໃນລະຫວ່າງການສົນທະນາຂອງຄະນະ. ສະເໜີໃຫ້ບັນດາຜູ້ຮ່ວມສົນທະນາ ແລະ ຜູ້ນໍາພາການສົນທະນາ ແຕ່ລະຄະນະ ໄດ້ປຶກສາຫາລືກັນກ່ອນ ເພື່ອປຶກສາຫາລື ແລະ ທໍາຄວາມເຂົ້າໃຈຮ່ວມກັນກ່ອນ ການສົນທະນາຕົວຈິງ ເພື່ອໃຫ້ການສົນທະນາມີຄວາມສອດຄ່ອງ ແລະ ແທດເໝາະກັບຕົວຈິງກວ່າ.

ຜູ້ເຂົ້າຮ່ວມສົນທະນາ ຈະຖືກກໍານົດ ໂດຍອີງໃສ່ການຊີ້ນໍາຂອງໜ່ວຍງານວິຊາການຂະແໜງການທີ່ກ່ຽວຂ້ອງ ຫຼື ຂົງເຂດນະໂຍບາຍແຫ່ງຊາດທີ່ກ່ຽວຂ້ອງ.

ປະຕິບັດຕາມຄໍາຖາມເຫຼົ່ານີ້, ຜູ້ນໍາພາການສົນທະນາ ຈະນໍາພາໃຫ້ມີການສົນທະນາເພີ່ມເຕີມກັບຜູ້ເຂົ້າຮ່ວມສົນທະນາ ແລະ ຜູ້ເຂົ້າຮ່ວມຮັບຟັງ ແລະ ຕິດຕາມຜູ້ອື່ນໆ ຢູ່ໃນຫ້ອງປະຊຸມ.

ເນື່ອງຈາກເວລາມີຈໍາກັດ, ແນະນໍາໃຫ້ຜູ້ເຂົ້າຮ່ວມທົ່ວໄປ ມີຄໍາເຫັນສູງສຸດ ບໍ່ເກີນ 3 ນາທີ. ຈະມີຜູ້ກໍາກັບເວລາເພື່ອເຕືອນນັກສົນທະນາ.

ບໍ່ຈໍາເປັນຕ້ອງລົງທະບຽນລ່ວງໜ້າ ເພື່ອສະເໜີມີຄໍາຖາມ ຫຼື ປະກອບຄໍາເຫັນ.

**ເວທີການສົນທະນາ ຫົວຂໍ້ທີ 2**

**ຜູ້ເຂົ້າຮ່ວມສົນທະນາ**

ຜູ້ເຂົ້າຮ່ວມສົນທະນາ ປະກອບມີ ດັ່ງນີ້:

1. ທ່ານ ສີທອງ ສີຂາວ, ວ່າການແທນຫົວໜ້າກົມແຜນການ, ກະຊວງສຶກສາທິການ ແລະ ກິລາ,
2. ທ່ານ ດຣ. ນາງ ພອນສະຫວັນ ແກ້ວນະຄອນ, ຫົວໜ້າສູນໂພຊະນາການ, ກະຊວງສາທາລະນະສຸກ,
3. ທ່ານ ວິລະສັກ ສຸພັນທອງ ຮອງຫົວໜ້າສະຖາບັນພັດທະນາສີມືແຮງງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ທ່ານ ນາງ ບຸນຕາ ສີປະເສີດ , ຫົວໜ້າພະແນກຮ່ວມມືສາກົນ, ກົມແຜນການ ແລະ ການຮ່ວມມື, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
4. ທ່ານ ສົມເພັດ ຈິດຕາວັນ, ຫົວໜ້າກົມວັດທະນະທໍາ, ກໍາມາທິການວັດທະນະທໍາ-ສັງຄົມ, ສະພາແຫ່ງຊາດ,

5. ທ່ານ ນາງ ເວຍເລີ ສະເມັດ, ຫົວໜ້າຝ່າຍການຮ່ວມມື, ສະຫະພາບເອີຣົບ
6. ທ່ານ ໄຊປະເສີດ ສູນທະວົງ, ນັກສຶກສາ ຄະນະນິຕິສາດ ແລະ ລັດຖະສາດ, ມຊ, ທັງເປັນ ໄວໜຸ່ມຂອງໂຄງການ Young People Action Team of UNICEF East Asia and Pacific Region Office
7. ທ່ານ ພູໄຊ ເທບພະວົງ, ເລຂາທິການ, ສະພາການຄ້າ ແລະ ອຸດສະຫະກຳ.

ສະເໜີຜູ້ສະໝັກສູງສຸດ 7 ຄົນ, ໂດຍພິຈາລະນາເຖິງຄວາມສົມດຸນລະຫວ່າງຍິງ-ຊາຍ ດັ່ງນີ້:

ຜູ້ນໍາພາການສົນທະນາ: ທ່ານ ນາງ ລັດດາວັນ ຕຸລາລົມ, LASES

ເວລາ: 1 ຊົ່ວໂມງ 30 ນາທີ

**ພາກສະເໜີ**

ຄະນະສົນທະນາດັ່ງກ່າວຈະກວດກາຄວາມສຳພັນລະຫວ່າງການພັດທະນາຊັບສິນດ້ານມະນຸດ, ການລົງທຶນຂອງພາກສັງຄົມ, ການເຕີບໂຕດ້ານເສດຖະກິດ, ໂດຍຍົກໃຫ້ເຫັນຄວາມສຳຄັນຂອງການຊຸກຍູ້ການພັດທະນາຊັບສິນດ້ານມະນຸດເພື່ອສະໜັບສະໜູນການເຕີບໂຕເສດຖະກິດທັງໃນປະຈຸບັນ ແລະ ອະນາຄົດ, ລວມທັງການຈັດຕັ້ງປະຕິບັດຕາມເປົ້າໝາຍຂອງ ແຜນ ພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 9 ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 10.

ການພັດທະນາຊັບສິນດ້ານມະນຸດ (HCD) ແມ່ນພື້ນຖານສໍາລັບການເຕີບໂຕແບບຍືນຍົງ ແລະ ແບບກວມລວມຢູ່ໃນ ສປປ ລາວ. ນີ້ແມ່ນຍັງເປັນສິ່ງທ້າທາຍ ອັນເນື່ອງມາຈາກຄວາມຕ້ອງການທີ່ໃຫ້ມີວິທີການທີ່ມີຫຼາຍຂະແໜງການມີສ່ວນຮ່ວມໃນການພັດທະນາຊັບສິນດ້ານມະນຸດ ທີ່ປະກອບດ້ວຍດ້ານເສດຖະກິດ, ດ້ານສັງຄົມ, ແລະ ສະຖາບັນ.

ການແກ້ໄຂ ການພັດທະນາຊັບສິນດ້ານມະນຸດ ຮຽກຮ້ອງໃຫ້ມີການປັບປຸງລະບົບການສຶກສາ ແລະ ສຸຂະພາບ, ຫຼຸດຜ່ອນຄວາມບໍ່ເທົ່າທຽມ, ການລົງທຶນໃນພື້ນຖານໂຄງລ່າງ ແລະ ຮັບຮອງເອົານະໂຍບາຍລ່ວງໜ້າ ທີ່ໃຫ້ຄວາມສໍາຄັນຂອງຊັບສິນດ້ານມະນຸດເປັນຕົວຂັບເຄື່ອນທີ່ສໍາຄັນ ຂອງຄວາມກ້າວໜ້າທາງດ້ານເສດຖະກິດ ແລະ ສັງຄົມ. ຍ້ອນພວກເຮົາມີປະຊາກອນໄວໜຸ່ມ ແລະ ມີການເຕີບໂຕຂອງປະຊາກອນສູງ, ດັ່ງນັ້ນ ພວກເຮົາຈຶ່ງມີທ່າແຮງສໍາລັບກໍາລັງແຮງງານທີ່ມີທັກສະ ແລະ ມີການສຶກສາ.

ຄະນະສົນທະນາດັ່ງກ່າວ ຈະສະເໜີວິທີແກ້ໄຂບັນດາສິ່ງທ້າທາຍຕ່າງໆ ເຊັ່ນ: ຜົນໄດ້ຮັບການຮຽນຮູ້ຕໍ່າ, ການຂາດສານອາຫານ, ການເຂົ້າເຖິງດ້ານສາທາລະນະສຸກທີ່ຈໍາກັດ, ຄຸນນະພາບການສຶກສາ ແລະ ການຝຶກອົບຮົມວິຊາຊີບທີ່ຍັງຕໍ່າ ແລະ ບໍ່ສອດຄ່ອງກັບຄວາມຕ້ອງການຂອງພາກເອກະຊົນ, ອັດຕາການອອກໂຮງຮຽນສູງ ແລະ ການເຄື່ອນຍ້າຍເຂົ້າອອກ ແລະ ເຄື່ອນຍ້າຍພາຍໃນ ແລະ ຕ່າງປະເທດເພີ່ມຂຶ້ນ; ຊຶ່ງທັງໝົດນີ້ເປັນປັດໄຈທີ່ຂັດຂວາງການພັດທະນາແບບຍືນຍົງ. ການແກ້ໄຂຊ່ອງຫວ່າງເຫຼົ່ານີ້ ສາມາດສ້າງຄວາມເຂັ້ມແຂງໃຫ້ແກ່ບຸກຄົນ ແລະ ເສີມຂະຫຍາຍຄວາມສາມາດຂອງປະເທດໃນການເຕີບໂຕ ໃນຕະຫຼາດພາກພື້ນ ແລະ ໃນໂລກ.

ການທົບທວນກາງໄລຍະກາງຂອງ NSEDP ຄັ້ງທີ 9 ແລະ ກອງປະຊຸມໂຕະມົນ ປີ 2023 ໄດ້ແນະນໍາໃຫ້ເພີ່ມການໃຊ້ຈ່າຍໃຫ້ແກ່ຂະແໜງການສັງຄົມ ໂດຍຜ່ານການລະດົມລາຍຮັບໃຫ້ຫຼາຍຂຶ້ນ. ມີຂໍ້ສະເໜີແນະສະເພາະກ່ຽວກັບການເພີ່ມງົບປະມານທີ່ບໍ່ແມ່ນເງິນເດືອນ, ກ່ຽວກັບການແກ້ໄຂການຂາດເຂີນຄູ, ໃຫ້ບຸລິມະສິດສໍາລັບທັກສະຂັ້ນພື້ນຖານ, ການຮັບປະກັນການວາງແຜນທີ່ລະອຽດອ່ອນດ້ານໂພຊະນາການ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ແຜນງານການປົກປ້ອງສັງຄົມ.

ສະຖານະການເສດຖະກິດ ແລະ ງົບປະມານທີ່ທ້າທາຍຂອງລາວ ຍັງສືບຕໍ່ຈຳກັດທ່າແຮງທາງດ້ານງົບປະມານຫຼາຍຂຶ້ນ. ອັດຕາເງິນເຟີ້ສູງບວກກັບຄ່າເງິນກີບອ່ອນຄ່າ ໝາຍຄວາມວ່າຫຼາຍຄອບຄົວ ໂດຍສະເພາະຄອບຄົວທີ່ມີລາຍໄດ້ຕ່ຳ ມີລາຍໄດ້ໜ້ອຍລົງ ເພື່ອໃຊ້ຈ່າຍທາງດ້ານສຸຂະພາບ ແລະ ການສຶກສາ. ການເຄື່ອນຍ້າຍອອກນອກປະເທດ, ການຂາດເຂີນແຮງງານ ແລະ ສະພາບແວດລ້ອມໃນການດຳເນີນທຸລະກິດທີ່ທ້າທາຍ ເຮັດໃຫ້ການພັດທະນາປະເທດພົບຄວາມຫຍຸ້ງຍາກ.

ພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 10 ແມ່ນມີຄວາມສຳຄັນຕໍ່ການຈັດວາງການພັດທະນາຊັບສິນດ້ານມະນຸດເປັນຫຼັກ ຂອງຍຸດທະສາດການຫັນປ່ຽນເສດຖະກິດຂອງຕົນ.

ກອງປະຊຸມຊັບສິນດ້ານມະນຸດໄດ້ຈັດຂຶ້ນ ສອງຄັ້ງ ຄື ໃນປີ 2023 ແລະ 2024 ເພື່ອເລັ່ງໃສ່ການພັດທະນາການສຶກສາ ແລະ ໂພຊະນາການ ເພື່ອພັດທະນາຊັບສິນດ້ານທຶນມະນຸດ, ໂດຍທ່ານນາຍົກລັດຖະມົນຕີ ເປັນປະທານ.

ກອງປະຊຸມສຸດຍອດຊັບສິນດ້ານມະນຸດຄັ້ງທຳອິດຂອງລາວ ຈັດຂຶ້ນໃນປີ 2023 ໄດ້ສຸມໃສ່ການສຶກສາຕິດຕາມກອງປະຊຸມສຸດຍອດການຫັນປ່ຽນການສຶກສາ (TES) ທີ່ຈັດຂຶ້ນທີ່ ນິວຢອກ ໃນປີ 2022. ຜົນກອງປະຊຸມດັ່ງກ່າວ ໄດ້ເປັນທິດທາງໃນການກຳນົດ ມະຕິຕົກລົງຂອງລັດຖະບານສະບັບເລກທີ 09/ລບ ທີ່ລັດຖະບານໄດ້ໃຫ້ຄຳໝັ້ນສັນຍາແກ້ໄຂຜົນການຮຽນທີ່ບໍ່ດີ, ສະກັດກັ້ນການອອກໂຮງຮຽນ, ເພີ່ມທະວີການພັດທະນາວິຊາຊີບຄູແບບຕໍ່ເນື່ອງ (ລວມທັງການຕັດສິນໃຈຄັ້ງທຳອິດຂອງລັດຖະບານທີ່ຈະຈ່າຍເງິນອຸດໜູນໃຫ້ແກ່ຄູອາສາສະໝັກ) ແລະ ປັບປຸງການເງິນຂອງສຶກສາ.

ໃນເດືອນ ມິຖຸນາ 2024, ກອງປະຊຸມສຸດຍອດຊັບສິນດ້ານມະນຸດຄັ້ງທີ 2 ໄດ້ຈັດຂຶ້ນດ້ວຍຄຳຂວັນ 'ການເລັ່ງລັດການພັດທະນາວຽກງານໂພຊະນາການເພື່ອການພັດທະນາຊັບສິນດ້ານມະນຸດ', ເຊິ່ງລັດຖະບານໄດ້ໃຫ້ຄຳໝັ້ນສັນຍາຫຼາຍຢ່າງ ໂດຍສະເພາະດ້ານໂພຊະນາການທີ່ຕິດພັນກັບການພັດທະນາຊັບສິນດ້ານມະນຸດ.

**ຂັ້ນຕອນ**

1. **ຜູ້ນຳພາການສົນທະນາ ນຳສະເໜີຫຍໍ້ກ່ຽວກັບຫົວຂໍ້** (**5 ນາທີ**):

   ***ຊັບສິນດ້ານມະນຸດແມ່ນກະດູກສັນຫຼັງຂອງການພັດທະນາເສດຖະກິດ ແລະ ສັງຄົມຂອງປະເທດຊາດ. ໃນສະພາບການຂອງ ສປປ ລາວ, ເປັນຫຍັງພວກເຮົາຈຶ່ງຕ້ອງຮີບຮ້ອນລົງທຶນໃສ່ການພັດທະນາຊັບສິນດ້ານມະນຸດໃນປັດຈຸບັນ ແລະ ອັນໃດທີ່ພວກເຮົາຄວນສຸມໃສ່?***

2. ຄຳຖາມສຳລັບຜູ້ສົນທະນາ (5 ນາທີຕໍ່ ຄົນ - ລວມ 35 ນາທີ)[1]:

   **ກະຊວງສຶກສາທິການ ແລະ ກິລາ**

   **ການສຶກສາແມ່ນສຳຄັນທີ່ສຸດເພື່ອໃຫ້ຊາວໜຸ່ມຂອງພວກເຮົາມີທັກສະທີ່ຈຳເປັນສຳລັບການພັດທະນາເສດຖະກິດໃນອະນາຄົດ. ການປະຕິຮູບຫຼັກອັນໃດແດ່ທີ່ຈະໄດ້ຈັດຕັ້ງປະຕິບັດເພື່ອປັບປຸງຜົນການຮຽນຮູ້, ການຂາດແຄນຄູ ແລະ ທັກສະທີ່ເປັນພື້ນຖານຂອງນັກຮຽນ ເພື່ອຮັບປະກັນບົດບາດຂອງການສຶກສາໃນການພັດທະນາຊັບສິນດ້ານມະນຸດ?**

   **ກະຊວງສາທາລະນະສຸກ**

[1] Choice of questions will depend on the final choice of panellists.

ການຂາດສານອາຫານ ແລະ ການເຂົ້າເຖິງການດູແລສຸຂະພາບທີ່ຈຳກັດ ໄດ້ສ້າງຂໍ້ຈຳກັດໃນການພັດທະນາຊັບສິນດ້ານມະນຸດ. ພາຍໃຕ້ແຜນປະຕິບັດງານແຫ່ງຊາດກ່ຽວກັບໂພຊະນາການ (NPAN), ກະຊວງສາທາລະນະສຸກຈະໄດ້ດຳເນີນການຫຍັງແດ່ເພື່ອປັບປຸງໂພຊະນາການ ແລະ ຜົນໄດ້ຮັບດ້ານສຸຂະພາບ, ໂດຍສະເພາະໃນບັນດາປະຊາກອນທີ່ມີຄວາມສ່ຽງທີ່ສຸດ?

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ພວກເຮົາຈຳເປັນຕ້ອງຮັບປະກັນວ່າ ບໍ່ໃຫ້ມີໃຜຖືກປະໄວ້ທາງຫລັງໃນການພັດທະນາຊັບສິນດ້ານມະນຸດ. ພວກເຮົາຈະເຮັດແນວໃດເພື່ອຮັບປະກັນ ໃຫ້ທຸກຄົນໄດ້ເຂົ້າເຖິງໂຄງການປະກັນສັງຄົມ/ປົກປ້ອງສັງຄົມ, ໂດຍສະເພາະໃນເຂດຫ່າງໄກສອກຫຼີກ?

ສະພາແຫ່ງຊາດ + ກະຊວງການເງິນ

ໃນສະພາບທີ່ມີຊັບພະຍາກອນທີ່ຈຳກັດ, ເຮົາຈະຮັບປະກັນແນວໃດເພື່ອໃຫ້ບັນດາຂະແໜງການສັງຄົມ ໄດ້ຮັບການສະໜອງທຶນຢ່າງພຽງພໍ ເພື່ອແກ້ໄຂຄວາມຕ້ອງການດ້ານການພັດທະນາມະນຸດ/ພັດທະນາສີມືແຮງງານ ເພື່ອສະໜັບສະໜູນການພັດທະນາເສດຖະກິດ - ສັງຄົມ?

ຍ້ອນຂໍ້ຈຳກັດດ້ານງົບປະມານທີ່ມີໃນປັດຈຸບັນ, ລັດຖະບານຈະຈັດແບ່ງແຫຼ່ງຊັບພະຍາກອນແນວໃດເພື່ອໃຫ້ໄດ້ຜົນຕອບແທນສູງສຸດຈາກການລົງທຶນດ້ານການສຶກສາ, ສາທາລະນະສຸກ ແລະ ການປົກປ້ອງສັງຄົມ?

ຕົວແທນຊາວໜຸ່ມ

ເຍົາວະຊົນເປັນຕົວແທນທີ່ສຳຄັນຂອງປະຊາກອນຂອງພວກເຮົາ ແລະ ຖືເປັນກຸນແຈສຳລັບການພັດທະນາໃນອະນາຄົດ. ຈາກທັດສະນະຂອງຊາວໜຸ່ມ, ແມ່ນຫຍັງຄືໂອກາດ ແລະ ສິ່ງທ້າທາຍຕົ້ນຕໍທີ່ ຊາວໜຸ່ມກຳລັງປະເຊີນໃນການເຂົ້າເຖິງການສຶກສາທີ່ມີຄຸນນະພາບ ແລະ ໂອກາດການຈ້າງງານ?

ທ່ານຮູ້ສຶກວ່າ ຈະຕ້ອງຮັບມືກັບສິ່ງທ້າທາຍເຫຼົ່ານີ້ ແນວໃດ?

ສະພາການຄ້າ

ລະບົບການສຶກສາ ແລະ ການຝຶກອົບຮົມ ສາມາດກະກຽມໃຫ້ໄວໜຸ່ມທີ່ມີທັກສະທີ່ກ່ຽວຂ້ອງສຳລັບການຈ້າງງານ, ແລະ ການມີວຽກເຮັດງານທຳໃນອານາຄົດ ເພື່ອຕອບສະໜອງໄດ້ກັບການປ່ຽນແປງຂອງຕະຫຼາດແຮງງານ ຄືແນວໃດ?

ທຸລະກິດສາມາດມີບົດບາດອັນໃດ ໃນການຮ່ວມມືກັບລັດຖະບານເພື່ອພັດທະນາ (ແລະ ຮັກສາ) ແຮງງານທີ່ມີທັກສະ?

ຄູ່ຮ່ວມພັດທະນາ

ຄູ່ຮ່ວມພັດທະນາຈະສະໜັບສະໜູນ ສສປ ລາວໃນການຈັດຕັ້ງປະຕິບັດຄຳໝັ້ນສັນຍາທີ່ໄດ້ວາງໄວ້ໃນ ກອງປະຊຸມສຸດຍອດຊັບສິນດ້ານມະນຸດໄດ້ແນວໃດ?

ຮູບແບບການຮ່ວມມືທີ່ປະສົບຜົນສຳເລັດ ແລະ ການປະຕິບັດທີ່ດີທີ່ສຸດຂອງສາກົນທີ່ພວກເຮົາສາມາດນຳໃຊ້ເພື່ອເລັ່ງການພັດທະນາແຫຼ່ງທຶນມະນຸດໃນປະເທດ ມີອັນໃດແນ່?

3. **ຄຳຖາມເພີ່ມເຕີມ (3 ນາທີຕໍ່ຄົນ – 21 ນາທີ):**

**ມີບູລິມະສິດຫຼາຍຢ່າງທີ່ຈະຕ້ອງຈັດຕັ້ງປະຕິບັດພາຍໃຕ້ທຶນທີ່ມີຈຳກັດ**

ລັດຖະບານສາມາດຈັດລຳດັບຄວາມສຳຄັນຂອງການພັດທະນາຊັບສິນດ້ານມະນຸດແນວໃດ ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 10?

ມີຍຸດທະສາດອັນໃດແດ່ເພື່ອຮັບປະກັນການປະສານງານຢ່າງມີປະສິດທິຜົນກັບບັນດາກະຊວງຕ່າງໆ ເພື່ອຈັດຕັ້ງປະຕິບັດແຜນພັດທະນາຊັບສິນດ້ານມະນຸດຢ່າງກົມກຽວກັນ?

**ການປ່ຽນແປງດິນຟ້າອາກາດ ສ້າງຄວາມສ່ຽງອັນໃຫຍ່ຫຼວງຕໍ່ຄວາມພະຍາຍາມພັດທະນາຂອງພວກເຮົາ.**

ພວກເຮົາສາມາດເຊື່ອມໂຍງຄວາມຢືດຢຸ່ນ ແລະ ຄວາມຍືນຍົງດ້ານສິ່ງແວດລ້ອມ ເຂົ້າໃນຍຸດທະສາດການພັດທະນາຊັບສິນດ້ານມະນຸດຂອງພວກເຮົາແນວໃດ ເພື່ອຮັບປະກັນຜົນປະໂຫຍດໃນໄລຍະຍາວ ແລະ ປົກປ້ອງການລົງທຶນຂອງພວກເຮົາເຂົ້າໃນການສຶກສາ ແລະ ສຸຂະພາບ?

**ຄວາມບໍ່ສະເໝີພາບຍັງຄົງເປັນອຸປະສັກຕໍ່ການເຕີບໂຕລວມ.**

ການລົງທຶນໃສ່ຊັບສິນດ້ານມະນຸດ ສາມາດຫຼຸດຜ່ອນຄວາມບໍ່ສະເໝີພາບລະຫວ່າງທ້ອງຖິ່ນຕ່າງໆ, ເພດ ແລະ ກຸ່ມທີ່ມີຖານະດ້ານເສດຖະກິດ-ສັງຄົມທີ່ແຕກຕ່າງກັນ ແນວໃດ ເພື່ອສົ່ງເສີມການພັດທະນາທີ່ມີຄວາມສະເໝີພາບ?

4. **ວາລະຖາມ-ຕອບ ລວມ (15 ນາທີ)**
5. **ສະຫຼຸບການສົນທະນາ (3 ນາທີ)**

Key Reference Documents

- **The Financing Strategy for the 9th NSEDP** details a set of specific actions intended to increase funding available for the health and education sectors. It also includes a specific action (action 9) on strengthening the alignment of the Medium-Term Budget Framework and Public Investment Plans with the policy priorities of the NSEDP.
- **The Education and Sports Sector Development Plan 2021-2025** outlines several strategic priorities to enhance education quality, accessibility, and outcomes, as well as to promote sports development. The overall objective is to improve human capital, reduce poverty, and ensure sustainable national development.
- **The Inclusive Education Strategy 2030** aims to ensure that all children in Laos, regardless of background, disability, gender, ethnicity, or socio-economic status, have equal access to quality education. The primary focus is to eliminate barriers to education and create an inclusive environment for every learner.
- **The Health Sector Development Plan 2021-2025** outlines strategic priorities aimed at improving the health and well-being of the Lao population. The main aim is to guarantee universal health coverage, improving service delivery, reducing health inequalities, and strengthening the healthcare system.
- **The National Plan of Action for Nutrition (NPAN)** – addresses malnutrition in all its forms, with a particular focus on reducing stunting, wasting, undernutrition, and micronutrient deficiencies among children and vulnerable populations. The overall goal is to improve the nutritional status of the population to support better health, human capital development, and economic growth.
- **The National Social Protection Strategy Mid-Term Review** assesses progress and identifies the key challenges to accelerating the implementation of the strategy to broaden and deepen social protection coverage.
- **The Lao Youth and Adolescent Development Strategy**, endorsed by the Prime Minister, identifies long-term national priorities to invest in its young population to be able to be able realize the potential of a demographic dividend.
- **The National Policy on Population and Development**, developed by MPI, includes priorities on reducing poverty, ensuring access to education, enhancing opportunities for disadvantages and vulnerable young people, and reducing disparities in dimensions related to birth and mortality rates.
- **The Macroeconomic Reform Roadmap** places a high priority on the reprioritization of spending towards the social sectors (education, health, and social protection).
- **The Smooth Transition Strategy for LDC Graduation** notes that the structural economic transformation necessary for a successful graduation process will only be possible with sufficient investments in human capital. Specific actions in the Strategy call for efforts to urgently address learning poverty and ensure access to basic social protection services.

- **The Resilience Framework** includes a pillar dedicated to the development of human capital, with actions relating to education, health and nutrition, gender equity, and demography and data.
- **Lao Social Indicator Survey III (LSIS III)** provides the first set of national data on the welfare of children and women in Lao PDR since the outbreak of the COVID-19 pandemic as well as essential insights into the social development strides and challenges within the country.
- **Lao PDR Economic Monitor, Accelerating Reforms for Growth, Thematic Section**: Education for growth and development report.